ຮຽນ: ທ່ານຜູ້ມີໃຈບຸນໃຈກຸສົນແລະມີເມດຕາຈິດທຸກໆທ່ານ

ເລື່ອງ: ໂຄງການຊ່ວຍເຫລືອຊື້ອຸປະກອນການຜ່າຕັດ **Monitoring Oxymter (portable patient monitoring)** ໂຮງໝໍເມືອງຊຽງຮ່ອນ ແຂວງໄຊຍະບູຣີ

ສະມາຄົມສາກົນເພື່ອສິດທິຂອງເດັກນ້ອຍທີ່ດ້ອຍໂອກາດແລະຂັດສົນ ມີຄວາມຍິນດີຂໍແຈ້ງຂ່າວການຮັບຮອງເອົາໂຄງການການຊ່ວຍເຫລືອເພື່ອຊອກທຶນຊື້ເຄື່ອງມືອຸປະກອນການຜ່າຕັດ **portable patient monitoring** ໃຫ້ໂຮງໝໍເມືອງຊຽງຮ່ອນ ແຂວງໄຊຍະບູຣີ ຕາມຄຳສະເໜີຂອງໂຮງໝໍເມືອງທີ່ຕິດຂັດມານີ້ ໂຮງໝໍເມືອງແຫ່ງນີ້ໄດ້ທຳການຜ່າຕັດເພື່ອຊ່ວຍຊີວິດຂອງປະຊາຊົນມາແລ້ວຫລາຍຊີວິດ ໃນຂົງເຂດ ໔ ຕົວເມືອງເໜືອອັນມີ ເມືອງຊຽງຮ່ອນ ເມືອງຫົງສາ ເມືອງເງິນ ແລະ ເມືອງຄອບ ແຂວງໄຊຍະບູຣີ. ການຜ່າຕັດເປັນໄປດ້ວຍຄວາມຍາກລຳບາກເພາະຂາດອຸປະກອນອັນສຳຄັນ ຄື ເຄື່ອງຕິດຕາມອາການຂອງຄົນໄຂ້, ການເຕັ້ນຂອງຫົວໃຈ, ຕິດຕາມຄວາມດັນຂອງຄົນໄຂ ເປັນຕົ້ນ ແຕ່ກໍ່ຕ້ອງໄດ້ ທຳການຜ່າຕັດເພື່ອຊ່ວຍຊີວິດຂອງຄົນໄຂ້ທີ່ບໍ່ສາມາດຈະເດີນທາງໄປທຳການຜ່າຕັດຢູ່ໃນເມືອງໃຫຍ່ ການຜ່າຕັດທີ່ຜ່ານມາທ່ານໝໍຈະໃຊ້ແຕ່ເຄື່ອງຟັງທາງຫູແນວດຽວເພື່ອຟັງການເຕັ້ນຂອງຫົວໃຈ ແລະ ຕິດຕາມອາການຂອງຄົນໄຂ້ຕະຫລອດເຖິງການວາງຢາສະລົບ ໂດຍທ່ານໝໍຈະຟັງການເຕັ້ນຂອງຫົວໃຈຄົນໄຂ້ພຽງຢ່າງດຽວແລະຄ່ອຍວາງຢາສະລົບ ຊຶ່ງເປັນວິທີການທີ່ເປັນການຜ່າຕັດອັນສ່ຽງອັນຕະລາຍຫລາຍທີ່ສຸດແຕ່ທ່ານໝໍກໍ່ຈຳເປັນຕ້ອງໄດ້ທຳການຜ່າຕັດຍ້ອນຄວາມຈຳເປັນອັນຮີບດ່ວນເພື່ອຊ່ວຍຊີວິດຄົນໄຂ້ໃນຍາມຈຳເປັນ ໂຮງໝໍເມືອງຊຽງຮ່ອນຖືວ່າເປັນໂຮງໝໍໜຶ່ງທີ່ມີທ່ານໝໍຜູ້ທີ່ມີຄວາມສາມາດສູງສົມຄວນ ຊຶ່ງໄດ້ທຳການຜ່າຕັດໃນຂັ້ນພື້ນຖານ ເຊັ່ນການຜ່າຕັດໄສ້ຕິ່ງ ຜ່າຕັດເອົານິ້ວອອກ, ຜ່າຕັດເອົາຖົງບີອອກ, ຜ່າຕັດຊ່ວຍຜູ້ທີ່ອອກລູກຍາກ ແລະ ເຄີຍຜ່າຕັດຍົນລຳໄສ້ຂອງຄົນໄຂ້ທີ່ຖືກກະສຸນປືນມາແລ້ວແລະກໍລອດຊີວິດມາໄດ້ຢ່າງປອດໄພ.

ອຸປະກອນການຕິດຕາມອາການຂອງຄົນໄຂ້ຫຼື **Monitoring Oxymeter** ຈຶ່ງຖືວ່າເປັນຄວາມຈຳເປັນຫລາຍອັນຮີບດ່ວນທີ່ທາງ ***IARNSC*** ເຫັນວ່າການຊ່ວຍເຫລືອເປັນສິ່ງຄວນທຳແລະຮີບດ່ວນຈຶ່ງມີມະຕິຕົກລົງຊ່ວຍເພື່ອຊອກທຶນຊື້ອຸປະກອນນີ້

ຈຶ່ງຂໍແຈ້ງມາຍັງບັນດາທ່ານທີ່ມີນ້ຳໃຈສູງສົ່ງ ແລະ ປະເສີດທີ່ມີຈຸດປະສົງຢາກມີສ່ວນຊ່ວຍຮ່ວມໃນການອອກທຶນເພື່ອຊື້ອຸປະກອນດັ່ງກ່າວນີ້ ກະລຸນາແຈ້ງຈຸດປະສົງຂອງທ່ານໄປຍັງຂ້າພະເຈົ້າ ສົມພອນ ສະໝອນແກ້ວ **Tel.: 450.668.9521 email:** ssamonekeo@sympatico.ca **Mob. 514.651.1626** ຫຼືຈະຕິດຕໍ່ໂດຍກົງໄປທີ່ ***IARNSC*** **Tel.: 514.274.4953 email** aideds@sympatico.ca ທາງ ***IARNSC*** ຈະອອກໃບຮັບທາງການເພື່ອທ່ານຈະໄດ້ນຳໄປຫລຸດຜ່ອນພາສີລາຍໄດ້ຂອງທ່ານ.

ຂໍສະແດງຄວາມຂອບໃຈມາຍັງທຸກໆທ່ານທີ່ໃຫ້ຄວາມສົນໃຈແລະເຫັນຄວາມຈຳເປັນນີ້

ຂໍສະແດງຄວາມນັບຖື

ສົມພອນ ສະໝອນແກ້ວ

To Whom it may concern,

Subject: Requisition of Monitoring Oxymeter (patient monitoring )

Through this message, *the International Association for the Rights of the Needy and Suffering Children (IARNSC*) has declared that it fully endorses and approves the project acquisition of Monitoring Oxymeter (portable patient monitoring) as request of Xienghone District Hospital. The equipment for helping to monitor patient in operation room, monitor patient's pulse rate, monitor the patient presser and so on. This hospital has serves 4 major cities from northern part of Sayabury consist of Muang Xienghone, Muang Hongsa, Muang Ngeun and Muang Khob These 4 cities are members of 47 cities consider to be under poverty level cities in Lao People Democratic Republic (LPDR).

In the past surgeries or operations were done without modern equipment such as patient monitoring equipment, doctor would monitor patients ability through an old fashion way such as taking pulse rate by hand etc. This hospital has performed many operations to save lives of many people in the area who could not afford to go to big hospital in the city.

Monitor Oxymeter is necessary and urgent need for this hospital therefore *IARNSC* has indicate its support to an important project and also for those who wish to help by giving generous monetary donation, the *IARNSC* can also issue the official receipts for income tax reduction purpose.

For further details or if you wish to make generous donation for this project, please do not hesitate to contact M. Somphone Samonekeo 450.668.9521 email: ssamonekeo@sympatico.ca or direct to *IARNSC* Mr. Mary-Jacques Cambay or Ms. Geraldine Etienne at 514.274.4953 email.: aideds@sympatico.ca

Respectfully,

Somphone S.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ


ເມືອງຊຽງຮ່ອນ

ໂຮງໝໍເມືອງຊຽງຮ່ອນ

(856)74 810005

(856)205385443


ເລກທີ່ 19 /ສທ.ຊຮ

ວັນທີ. 25 ເມສາ 2010

# <u>ໃບສະເໜີ</u>

ຮຽນ : ທ່ານຫົວໜ້າສະມາຄົມເພື່ອສິດທິຂອງເດັກນ້ອຍທີ່ດ້ອຍໂອກາດ ທີ່ປະເທດການາດາ ທີ່ນັບຖື.

ເລື່ອງ : ໂຮງໝໍເມືອງຊຽງຮ່ອນຕ້ອງການເຄື່ອງໂມນີໂຕລິງ ອົກຊີ້ແມັດເຕີ ( Monitoring Oxymetter )

ປະໂຫຍດ : ເນື່ອງຈາກວ່າເມືອງຊຽງຮ່ອນແມ່ນເມືອງໜຶ່ງທີ່ທຸກຍາກໜຶ່ງໃນ 47 ເມືອງທົ່ວປະເທດ ແລະ ໂຮງໝໍເມືອງຊຽງຮ່ອນແມ່ນໜຶ່ງໃນໂຮງໝໍທີ່ມີຄວາມສາມາດສູງໄດ້ຊ່ວຍເຫຼືອປະຊາຊົນຜູ້ທຸກຍາກ ແລະ ສາມາດເຮັດການຜ່າຕັດສຸກເສີນແກ້ໄຂຊີວິດການເປັນຢູ່ພໍ່ແມ່ປະຊາຊົນໄດ້ເປັນຢ່າງດີ, ແຕ່ເຖິງຢ່າງໃດກໍ່ຕາມທາງໂຮງໝໍຂອງພວກເຮົາກໍ່ຍັງຂາດທຶນຮອນ ແລະ ອຸປະກອນຈຳນວນໜຶ່ງຢາກຮຽກຮ້ອງຂໍຄວາມຊ່ວຍເຫຼືອມາຍັງທ່ານ ຊ່ວຍພິຈະລະນາປະກອບສ່ວນ ຊ່ວຍເຫຼືອພວກເຮົາດ້ວຍ. ພວກເຮົາຂໍຈົດຈຳຈາລຶກບຸນຄຸນທີ່ດີຂອງທ່ານ.ຂໍອວຍພອນໄຊພວກທ່ານມີສຸຂະພາບແຂງແຮງ ພາລານາໄມທີ່ສົມບູນພອນໃດອັນປະເສີດຈົ່ງເກີດມີແກ່ທ່ານ,

ຮຽນມາດ້ວຍຄວາມນັບຖືຢ່າງສູງ

<u>ຫົວໜ້າອຳນວຍການໂຮງໝໍ</u>

ຜູ້ປະຈຳການ

ດຣ. ອິນປັນ ຍົດບຸນ

Dr. Inpanh YODBOUN

**Lao People Democratic Republic**
**Peace independence democracy unity and prosperity**

City of Xienghone
City Hospital
(856)74 810005
(856) 205385443

No. 19 / PH. XH

Date: 25 April 2010

# Aid requisition

Dear Mr. President of International Association for the Rights of the Needy and Suffering Children

Subject: City of Xienghone hospital require Monitoring OxyMeter – portable patient monitoring (see attached sheet)

Currently this hospital serves 4 major northern cities and these cities are considered being 47 cities of LPDR being under poverty level. City of Xienghone hospital is considered to be one of high capability and had help many poor population in the area, being able to perform surgery and operation and help save many lives.

At present time this hospital is in urgent need equipment to help perform surgery and operation, in the past and up to now doctor perform surgery without monitoring equipment, this hospital is really need Monitoring Oxymeter to help facilitate the operation. At the present time doctors have performed surgery and operation in old fashioned way

With respectful, we send this letter to you for consideration helping to provide funding to purchase patient monitoring equipment (Monitoring Oxymeter)

At last we wish you a happy and healthy life.

Respectfully

(sign)

Dr. Inpanh Yodboun

MEC -1000

Patient Monitor




www. eurocontinents.com

**Features:**

$ 4000 USD

- 10.4" color TFT display, with 4 waveforms
- Parameters including ECG/RESP, SpO2, NIBP, TEMP and Pulse Rate
- SpO2 pulse-tone modulation (Pitch Tone)
- Maximum 72-hour graphic and tabular trends of all parameters
- Built-in recorder and battery
- Suitable for adult, pediatric and neonatal patient
- Networkable with Hypervisor VI Central Monitoring System

Standard Configuration:

- ECG/RESP, NIBP, SPO2, TEMP, Lead Acid Battery (1 piece)